**ແຜນການສອນ**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 04 ຕຸລາ 2009 (10-04-2009)**

---

**ວີຣະຊົນຜູ້ເປັນນັກຣົບ:**

**ຂໍ້ພຣະຄັມພີໃນບົດຮຽນ**: (ມາຣະໂກ 11:12-25)

**ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:**

ພຣະເຢຊູ ນັກຣົບຜູ້ອາດຫານ ໄດ້ຊົງສຳແດງແກ່ຜູ້ທີ່ຕິດຕາມພຣະອົງວ່າ ຊີວິດທີ່ມີຄວາມເຊື່ອນັ້ນໄດ້ຊ່ອຍພວກເຂົາເຈົ້າໃຫ້ເປັນນັກຣົບຜູ້ມີຊັຍຊະນະຢ່າງໃດ ໃນການໃຊ້ຊີວິດການເປັນຢູ່ຢ່າງຄຣິສຕຽນ.

**ເປັນຫຍັງບົດຮຽນນີ້ຈຶ່ງມີຄວາມສຳຄັນ?:**

ໃນການໃຊ້ຊີວິດຢູ່ແຕ່ລະວັນນັ້ນທ່ານໄດ້ຝາກຄວາມໄວ້ວາງໃຈໄວ້ກັບສິ່ງທີ່ບໍ່ຖືກຕ້ອງບໍ່? ເວລາທ່ານໄວ້ວາງໃຈນຳເພື່ອນຝູງ, ເງິນຄຳ, ຫລືວຽກງານນັ້ນທ່ານໄດ້ສ້າງຜົນງານທີ່ສູນຫາຍໄປໄດ້. ເຖິງຢ່າງໃດກໍຕາມ, ການກາຍມາເປັນສາວົກຂອງພຣະເຢຊູຄຣິດຜູ້ເປັນນັກຣົບຕົວຈິງນັ້ນ ຈະຊ່ອຍຄຣິສຕຽນໃຫ້ມີພລັງອຳນາດ ມີຊັຍຊະນະເໜືອໂລກໄດ້.

**ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ?:**

ບົດຮຽນນີ້ ຈະຊ່ອຍໃຫ້ທ່ານໃຊ້ຊີວິດຢູ່ໃນຄວາມເຊື່ອຢ່າງມີຊັຍຊະນະ ແລະເກີດຜົນ.

**ການຈັດຕຽມ ແລະແຜນການສອນຂອງຄຣູ:**

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລື້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**ແນະນຳ:**

- ເຮັດແນວໃດຈຶ່ງເປັນນັກຣົບຜູ້ອາດຫານໄດ້, ພຣະເຢຊູ, ປະທານພລັງອຳນາດໃຫ້ເອົາຊະນະສັດຕຣູໃນເວລາທີ່ເຂົາເດີນຢູ່ໃນໂລກນີ້ຢ່າງໃດ?.
- ໃນຂນະນີ້ເປັນອາທິດສຸດທ້າຍຂອງພຣະເຢຊູທີ່ໃຊ້ຊີວິດຢູ່ໃນຝ່າຍໂລກ, ພຣະອົງຈະສຳແດງໃຫ້ຜູ້ທີ່ຕິດຕາມພຣະອົງວ່າພຣະອົງເປັນວີຣະຊົນຜູ້ອາດຫານແນວໃດ? ໂລກຈະພັນລະນາເຣື່ອງເກັ່ງກ້າອາດຫານໃນສມັຍນີ້ໄປແນວໃດ?

1. **ຕໍ່ສູ້ກັບການທີ່ບໍ່ເກີດຜົນ:** (ມາຣະໂກ 11:12-14,20-21)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ມາຣະໂກ 11:12-14,20-21
- ຂໍໃຫ້ນັກຮຽນອະທິບາຍເຣື່ອງການກະທຳຂອງຄົນຜູ້ທີ່ບໍ່ເກີດຜົນວ່າເປັນແນວໃດ?
- ເປົ້າໝາຍຂອງພວກເຮົາຢູ່ທີ່ອັຄສາວົກຊຶ່ງເປັນຜູ້ໃຫ້ໄປເກີດຜົນ. ພຣະເຢຊູຄຣິດຈະບໍ່ຮັບຜູ້ບໍ່ເກີດຜົນ ແລະຈະນຳໄປສູ່ການພິພາກສາ.
- ສເນີໃຫ້ນັກຮຽນເຫັນເຖິງຈຸດມຸ່ງຫວັງຂອງພຣະເຈົ້ານັ້ນເພື່ອໃຫ້ຜູ້ທີ່ເຊື່ອທັງຫລາຍເປັນຜູ້ທີ່ເກີດຜົນ (ຕົວຢ່າງລວມໄປເຖິງໝາກຜົນຂອງພຣະວິນຍານ) (ຄາລາເຕັຽ 5:22-23) ແລະການເປັນພຍານ.)
- ໝາກຜົນແຫ່ງຊີວິດຂອງຄຣິສຕຽນໄດ້ນຳພາຄົນອື່ນໆໃຫ້ມາຫາພຣະຄຣິດແນວໃດ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** (ມາຣະໂກ 11:12-14,20-21)

1. ທ່ານຈະຮູ້ໄດ້ຢ່າງໃດວ່າທ່ານເກີດຜົນສຳລັບພຣະເຢຊູ?
2. ໃນເມື່ອຜູ້ທີ່ເຊື່ອທັງຫລາຍຫາກບໍ່ຈົດຈຳ ແລະບໍ່ຮັບໃຊ້ພຣະເຢຊູ, ແລ້ວທ່ານຈະວ່າຢ່າງໃດທີ່ພຣະເຈົ້າບໍ່ຊົງໃຊ້ເຂົາ?
3. ບົດຮຽນເຣື່ອງຈິດວິນຍານທີ່ເຄີຍໄດ້ຮຽນມາໃນການດຳເນີນຊີວິດຂອງທ່ານນັ້ນມີຫຍັງແດ່?
4. ເປັນຫຍັງຈຶ່ງຕ້ອງມີຄວາມເຊື່ອໃນພຣະເຈົ້າທັງໆທີ່ມີຄວາມຫຍຸ້ງຍາກສຳລັບບາງຄົນ?
5. ການອະທິຖານມີອັນໃດທີ່ກ່ຽວຂ້ອງກັບເຣື່ອງຕົ້ນໝາກເດື່ອເທດ?

2. **ຜູ້ຕໍ່ສູ້ກັບສິ່ງກີດຂວາງ:** (ມາຣະໂກ 11:15-19)

- ສເນີໃຫ້ນັກຮຽນຜູ້ນຶ່ງອ່ານພຣະທັມ ມາຣະໂກ 11:15-19
- ອະທິບາຍໃຫ້ນັກຮຽນຮູ້ຈັກວ່າ ພຣະເຢຊູຊົງຮູ້ຈັກເວລາຂອງພຣະອົງທີ່ຢູ່ໃນໂລກເປັນເວລາທີ່ໃກ້ຈະສິ້ນສຸດ.
- ພຣະເຢຊູໄດ້ຊົງສຳແດງໃຫ້ເຫັນວ່າພຣະອົງເປັນວິຣະຊົນຜູ້ອາດຫານ, ດຽວນີ້ຈະຕໍ່ສູ້ (ຮົບ) ກັບຄົນຜູ້ທີ່ມີທ່າທີອວດເກັ່ງ ບໍ່ໂຄຣົບຢຳເກງທັງຫລາຍ.
- ທາງຝ່າຍໂລກໄດ້ກີດຂວາງການນະມັສການຂອງພວກເຮົາແນວໃດແດ່?
- ພວກເຮົາຈະຕ້ອງໄດ້ປ່ຽນແປງອັນໃດແດ່?
- ການນະມັສການອັນແທ້ຈິງນັ້ນຄືແນວໃດ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** ມາຣະໂກ 11:15-19

1. ຄຣິສຕຽນບາງຄົນຄິດວ່າການນະມັສການພຣະເຈົ້າແມ່ນຫຍັງ?
2. ໃນເວລານະມັສການຜູ້ທີ່ເຊື່ອທັງຫລາຍທີ່ມີເງື່ອນໄຂຣະບຽບການນະມັສການພາຍໃນຈິດໃຈສ່ວນຕົວນັ້ນຄືແນວໃດ?
3. ພວກເຮົາຈະກ່າວໂທດໃສ່ຜູ້ໃດທີ່ພາໃຫ້ການນະມັສການການບໍ່ມີຄວາມເຫລື້ອມໃສເກີດຂຶ້ນ?
4. ແມ່ນຫຍັງທີ່ການດຳເນີນທາງຝ່າຍໂລກທີ່ຂັດແຍ່ງ, ລົດຈຳນວນ ແລະເຮັດໃຫ້ຄຣິສຕຽນຫັນປ່ຽນການເດີນແຕ່ລະວັນຂອງຂອງເຂົາເຈົ້າ?

3 . **<u>ຕໍ່ສູ້ດ້ວຍພລັງທາງຄວາມເຊື່ອ:</u>** (ມາຣະໂກ 11:22-25)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ມາຣະໂກ 11:22-25
- ຄຳທີ່ພຣະເຢຊູໃຊ້ເປັນບົດຮຽນຝ່າຍຈິດວິນຍານເພື່ອໃຫ້ຜູ້ທີ່ຕິດຕາມພຣະອົງໃນມື້ນັ້ນແລະໃຫ້ຮັບໃຊ້ດ້ວຍຈິດວິນຍານ ດ້ວຍສຸດຈິດສຸດໃຈ ແລະກໍເປັນບົດຮຽນສຳລັບພວກເຮົາເຊັ່ນດຽວກັນ.
- ນັກຮົບຜູ້ອາດຫານມີຄວາມຕ້ອງການໃຫ້ເດັດຂາດຕໍ່ສັດຕຣູ ແລະປົກປ້ອງດ້ວຍທາງຄວາມເຊື່ອ. ພລັງແຫ່ງພຣະວິນຍານມາທາງການເຂົ້າໃຈຢ່າງຖືກຕ້ອງ ແລະການນຳມາປະຕິບັດໃນທາງຄວາມເຊື່ອ. "ສິ່ງທັງໝົດນີ້ໂດຍພຣະເຈົ້າແລ້ວມີທາງເປັນໄປໄດ້ໝົດ". ໃຫ້ນັກຮຽນແບ່ງປັນໃນຄວາມຮູ້ສຶກຂອງເຂົາເຈົ້າເຣື່ອງຄວາມສຳຄັນກ່ຽວກັບພຣະຄັມພີວ່າເປັນແນວໃດແດ່.
- ໃຫ້ອ່ານຄຳສັນຍາໃນຂໍ້ 24 ອີກເທື່ອນຶ່ງ ເປັນຫຍັງຄຳນີ້ບາງເທື່ອກໍມີການເຂົ້າໃຈຜິດ ຫລືຜູ້ທີ່ເຊື່ອບໍ່ໄດ້ໃຊ້ເລີຍ
- ຄຳສັນຍານີ້ໄດ້ຊີ້ໃຫ້ເຫັນສະພາບການໂດຍການອ່ານໃນຂໍ້ທີ 25.

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** ມາຣະໂກ 11:22-25

1. ຄວາມແຕກຕ່າງລະຫວ່າງການເວົ້າວ່າ, "ຂ້າພະເຈົ້າເຊື່ອ..." ແລະ "ຂ້າພະເຈົ້າປາຖນາ............"? ນັ້ນຄືແນວໃດ?
2. ໃນເວລາທີ່ທ່ານອະທິຖານດ້ວຍຄວາມເຊື່ອ ແລະບໍ່ມີສິ່ງໃດປາກົດເກີດຂຶ້ນທ່ານຈະຕອບສນອງແນວໃດ?
3. ຖ້າທ່ານບໍ່ຍອມໃຫ້ອະພັຍໃນການເດີນທາງຄຣິສຕຽນຂອງທ່ານຈະເປັນແນວໃດ?
4. ທ່ານມີຄວາມເຫັນດີ ຫລືບໍ່ມີຄວາມເຫັນດີກັບຂໍ້ຕໍ່ໄປນີ້ "ສິ່ງສຳຄັນທີ່ສຸດຄືສິ່ງທີ່ສະແດງອອກມາເປັນການກ່ຽວພັນທາງດ້ານພລັງແຫ່ງຄວາມເຊື່ອຊຶ່ງບໍ່ແມ່ນຈາກຈຳນວນທີ່ເຮົາເຊື່ອແຕ່ເປັນເພາະຄວາມເຊື່ອຂອງເຮົາ?

**<u>ພຣະຄັມພີແຫ່ງຄວາມຈິງ</u>**

- ທ່ານສາມາດມີຊີວິດທີ່ຊັຍຊະນະໂດຍທາງຄວາມເຊື່ອໃນເມື່ອທ່ານເກີດຜົນໃນຄຣິສຕຽນ.
- ທ່ານສາມາດມີຊີວິດທີ່ຊັຍຊະນະດ້ວຍຄວາມເຊື່ອໂດຍການຈົດຈໍ່ຢູ່ໃນພຣະເຈົ້າໃນການນະມັສການແລະການບໍ່ປ່ອຍໃຫ້ທາງຝ່າຍໂລກກ່ຽວຂ້ອງຂັດຂວາງທ່ານ.
- ທ່ານສາມາດມີຊີວິດທີ່ຊັຍຊະນະໃນເມື່ອທ່ານອະທິຖານດ້ວຍການຕໍ່ສູ້ໂດຍພຣະເຈົ້າ.
- ການບໍ່ຍອມໃຫ້ອະພັຍຄືນຜູ້ທີ່ເຮັດໃຫ້ທ່ານເຈັບປວດຈະເປັນການກີດຂວາງຊີວິດແຫ່ງຊັຍຊະນະໃນຄວາມເຊື່ອຂອງທ່ານ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by JH**